ເມືອງພຽງ ເລັ່ງໃສ່ປັກດຳນາແຊງ ແລະ ປູກພືດລະດູແລ້ງ
ທ່ານ ສົມຫວັງ ສີສົມພອນ ຫົວໜ້າຫ້ອງ ການກະສິກຳ ແລະ ປ່າໄມ້ເມືອງພຽງ ແຂວງໄຊຍະບູລີ
ໄດ້ໃຫ້ຮູ້ວ່າ: ມາຮອດປະຈຸບັນນີ້ ການປັກ ດຳນາແຊງ ແລະ ປູກພືດລະດູ
ແລ້ງຂອງຊາວກະສິກອນເມືອງ ພຽງ ແມ່ນສຳເລັດເກືອບ 100% ແລ້ວ, ໃນເນື້ອທີ່ທັງໝົດ 880
ເຮັກຕາ, ເມື່ອທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 20 ເຮັກຕາ, ຜົນ ຜະລິດຄາດວ່າຈະໄດ້ເຖິງ 4.200
ໂຕນ, ແນວພັນເຂົ້າ ສ່ວນຫຼາຍຈະເປັນເຂົ້າທ່າດອກ ຄຳ 1, ເຂົ້າວຽງຈັນ 450 ປີ ແລະ ເຂົ້າຈ້າວ
502 ຂອງຈີນ ໂດຍຈະເລັ່ງໃສ່ຜະລິດຢູ່ໃນ 21 ເຂດຊົນລະປະທານ. ພ້ອມ ດຽວກັນນີ້
ຍັງໄດ້ສົມທົບກັບບໍ ລິສັດ ສປ ຈີນ, ສົ່ງເສີມປູກເຂົ້າ ນາແຊງຢູ່ 5 ເຂດຈຸດສຸມຄື:

ຈຸດສຸມນ້ຳພຽງ ເບີ 1, ເບີ 2 ແລະ ຝາຍນ້ຳຕານ, ມອບໃຫ້ ບໍລິສັດຍີຍົງສົ່ງເສີມປະຊາຊົນ
ປູກເຂົ້າອິນຊີ ໃນເນື້ອທີ່ 60 ເຮັກຕາ, ຈຸດສຸມນ້ຳເຮ້ຍ ແລະ ຫ້ວຍຮ່ອງ ມອບໃຫ້ບໍລິສັດຊິງ
ຢວນ ສົ່ງເສີມປະຊາຊົນເຮັດ ນາຢອດເມັດ ເນື້ອທີ່ 50 ເຮັກ ຕາ ແລະ ມອບໃຫ້ກຸ່ມໂຮງສີ
ເຂົ້າສົ່ງເສີມໃຫ້ປະຊາຊົນປູກ ເຂົ້າໜຽວໃນເນື້ອທີ່ 100 ເຮັກ ຕາ, ຄາດວ່າເມືອງຈະຜະລິດ
ເຂົ້າທີ່ມີຄຸນນະພາບ ເພື່ອສົ່ງ ອອກຫຼາຍກວ່າ 1.200 ໂຕນ.

ນອກຈາກການປູກເຂົ້າ ນາແຊງແລ້ວ ຍັງປູກພືດລະດູ ແລ້ງຕື່ມອີກ ໃນເນື້ອທີ່ 600 ເຮັກຕາ,
ພືດສ່ວນໃຫຍ່ແມ່ນ ຈະຕິດພັນກັບຕະຫຼາດເຊັ່ນ: ຢາສູບ 40 ເຮັກຕາ, ໝາກໂມ ຈີນ 38 ເຮັກຕາ,
ໝາກແຕງຍີ່ ປຸ່ນ 5 ເຮັກຕາ, ສາລີຫວານ ແລະ ພືດອື່ນໆອີກຄາດວ່າ ການປູກເຂົ້ານາແຊງ ແລະ
ພືດລະດູແລ້ງຂອງຊາວກະສິ ກອນເມືອງພຽງ ແຂວງໄຊຍະ ບູລີ ແມ່ນຈະສຳເລັດໃນຕົ້ນ
ເດືອນກຸມພານີ້.
 (ຂ່າວ: ບຸນທີ ແສງຈັນທະລາ)

ແຫຼ່ງທີ່ມາ: http://www.pasaxon.org.la/index/05-02-16/content3.html
 1 / 1